# ປະກາດຮັບສະໝັກຕຳແໜ່ງ: ວິຊາການ/ນາຍຊ່າງ ກໍ່ສ້າງລະບົບນ້ຳລິນ

**ສະຖານທີ່:** ເມືອງ ບຸນເໜືອ ແລະ ຜົ້ງສາລີ, ແຂວງ ຜົ້ງສາລີ, ສ.ປ.ປ ລາວ

**ໄລຍະເວລາ:** ອີງຕາມສັນຍາໂຄງການ ( ປະມານ 30-35 ວັນ/ການກໍ່ສ້າງລະບົບນ້ຳລິນ)

**ປິດຮັບສະໝັກ:** ເປີດຮັບສະໝັກຈົນກວ່າໄດ້ຮັບຜູ້ສະໝັກ

## 1. ຄວາມເປັນມາຂອງໂຄງການ

ອົງການຮ່ວມມືກັບປະເທດລາວ (CCL) ກຳລັງຈັດຕັ້ງປະຕິບັດໂຄງການ GREEN (2023-2026), ເຊິ່ງມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃນການປັບໂຕຂອງຊຸມຊົນໃນທ້ອງຖິ່ນຕໍ່ກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ອົງປະກອບຫຼັກຂອງວຽກດັ່ງກ່າວນີ້ແມ່ນກ່ຽວຂ້ອງກັບການປັບປຸງການເຂົ້າເຖິງນ້ຳສະອາດແບບຍືນຍົງໂດຍການກໍ່ສ້າງ ແລະ ຟື້ນຟູລະບົບນ້ຳລິນຢູ່ໃນບ້ານເປົ້າໝາຍຂອງໂຄງການ.

ພວກເຮົາກຳລັງຊອກຫາວິຊາການ/ນາຍຊ່າງກໍ່ສ້າງລະບົບນ້ຳລິນທີ່ມີປະສົບການ ແລະ ມີຄວາມຫ້າວຫັນເຂົ້າຮ່ວມທີມງານຂອງພວກເຮົາຢູ່ພາກສະໜາມ,ທ່ານຈະເປັນຜູ້ທີ່ມີບົດບາດສຳຄັນໃນການນຳເອົານຳສະອາດເຂົ້າເຖິງຊຸມຊົນໂດຍການນຳພາເຂົາເຈົ້າກໍ່ສ້າງພື້ນຖານໂຄງຮ່າງຂອງລະບົບນ້ຳລິນດັ່ງກ່າວ.

## 2. ໜ້າທີ່ຮັບຜິດຊອບຫຼັກ

ວິຊາການ/ນາຍຊ່າງກໍ່ສ້າງລະບົບນ້ຳລິນຈະເປັນຜູ້ນຳພາການກໍ່ສ້າງຢູ່ພາກສະໜາມ ແລະ ເຮັດວຽກຮ່ວມກັບຊຸມຊົນໂດຍມີໜ້າວຽກຫຼັກດັ່ງຕໍ່ໄປນີ້ຄື:

- **ໃຫ້ຄຳແນະນຳໃນການກໍ່ສ້າງ:** ປະສານງານ, ໃຫ້ຄຳແນະນຳ ແລະ ຕິດຕາມວຽກງານການກໍ່ສ້າງ ແລະ ວາງລະບົບທໍ່ນ້ຳປະປາທັງໝົດ (ການກໍ່ສ້າງຫົວງານ, ສ້າງອ່າງເກັບນ້ຳ, ການວາງທໍ່ຕາມເຕັກນິກການອອກແບບ).
- **ໃຫ້ການຝຶກອົບຮົມ ແລະ ຄຳແນະນຳ:** ໃຫ້ຄຳແນະນຳທີ່ຈະແຈ້ງ ແລະ ການຝຶກອົບຮົມກັບບ່ອນເຮັດວຽກໂຕຈິງແກ່ຊາວບ້ານ.
- **ການຄວບຄຸມຄຸນນະພາບ:** ໃຫ້ແນ່ໃຈວ່າວຽກງານການກໍ່ສ້າງທັງໝົດປະຕິບັດຕາມແຜນ ແລະ ໄດ້ມາດຕະຖານຄຸນນະພາບຢ່າງເຂັ້ມງວດ (ວຽກກໍ່ສ້າງຄອນກີດເສີມເຫຼັກ, ການວາງທໍ່, ວຽກອື່ນໆ).
- **ການປະສານງານກັບຊຸມຊົນ:** ປະສານງານ ແລະ ເຮັດວຽກຮ່ວມກັບອຳນາດການປົກຄອງບ້ານ ແລະ ຄະນະກຳມະການຄຸ້ມຄອງນ້ຳຂັ້ນບ້ານຢ່າງໃກ້ຊິດ ເພື່ອໃຫ້ແນ່ໃຈວ່າເຂົາເຈົ້າເຂົ້າຮ່ວມໃນຂະບວນການກໍ່ສ້າງລະບົບນ້ຳລິນ.
- **ການລາຍງານ:** ລາຍງານປາກເປົ່າກ່ຽວກັບຄວາມຄືບໜ້າຂອງວຽກປະຈຳວັນໃຫ້ກັບຜູ້ປະສານງານໂຄງການ ແລະ ວິຊາການ ຜູ້ຮັບຜິດຊອບ ຊີຊີແອວຮັບຮູ້.

## 3. ປະສົບການ:

ພວກເຮົາກຳລັງຊອກຫາບຸກຄົນທີ່ສາມາດນຳພາ ແລະ ລົງມືເຮັດຕົວຈິງໄດ້:

- ເປັນນາຍຊ່າງທີ່ມີປະສົບການດ້ານການກໍ່ສ້າງພື້ນຖານໂຄງລ່າງ (ອ່າງເກັບນໍ້າ, ລະບົບທໍ່ວງານ) ຫຼື ວຽກກໍ່ສ້າງໂຄງຮ່າງຄອນກີດເສີມເຫຼັກ.
- ມີທັກສະໃນການອ່ານ ແລະ ເຂົ້າໃຈແບບແຕ້ມທາງດ້ານເຕັກນິກຢ່າງເລິກເຊິ່ງ.
- ມີປະສານການໃນການໃຫ້ຄໍາແນະນໍາທີມງານ ແລະ ນໍາພາໂຄງການກໍ່ສ້າງໃນຊຸມຊົນ.
- ມີທັກສະໃນການສື່ສານ ແລະ ຄວາມສາມາດທີ່ດີໃນການເຮັດວຽກຮ່ວມກັບຊຸມຊົນຢ່າງມີຄວາມອົດທົນ ແລະ ມີຄວາມເຄົາລົບ.
- ມີຄວາມກະຕືລືລົ້ນເຮັດວຽກຢູ່ເຂດຫ່າງໄກຊອກຫຼີກ ແລະ ສາມາດປັບຕົວເຂົ້າກັບສະພາບຄວາມເປັນຢູ່ຂັ້ນພື້ນຖານໄດ້ເປັນຢ່າງດີ.
- ມີຄວາມຮູ້ກ່ຽວກັບການວາງລະບົບທໍ່ນໍ້າ HDPE ແລະ GSP ຍິ່ງເປັນການດີ.

**4. ພວກເຮົາມີ:**

- ເງິນເດືອນລາຍວັນທີ່ສາມາດແຂ່ງຂັນໄດ້.
- ເງິນຄ່າເດີນທາງ, ຄ່າທີ່ພັກ ແລະ ອາຫານທີ່ກ່ຽວຂ້ອງກັບການເຮັດວຽກ.
- ພາຫານະ (ລົດຈັກ) ໃຫ້ສໍາລັບທ່ຽວເຮັດວຽກ.
- ໂອກາດທີ່ຈະນໍາໃຊ້ທັກສະຂອງທ່ານເຂົ້າໃນໂຄງການທີ່ມີຄວາມໝາຍທີ່ມີຜົນກະທົບທາງບວກຕໍ່ຊຸມຊົນໃນຊົນນະບົດ.
- ການເຮັດວຽກຢູ່ໃນທີມງານທີ່ມີການສະໜັບສະໜູນຂອງຜູ້ຊ່ຽວຊານຕ່າງປະເທດ ແລະ ຊ່ຽວຊານທ້ອງຖິ່ນ.

**5. ວິທີສະໝັກ:**

ພວກເຮົາເຂົ້າໃຈວ່າຊ່າງກໍ່ສ້າງທີ່ມີຄວາມຊໍານານຫຼາຍຄົນບໍ່ມີໃບສະໝັກງານທີ່ເປັນທາງການ.
ເພື່ອສະໝັກຕໍາແໜ່ງນີ້, ທ່ານພຽງແຕ່ສົ່ງອີເມວ ຫຼື ສົ່ງໜັງສືສະແດງຄວາມສົນໃຈ ແລະ ປະຫວັດຂອງທ່ານ. ຖ້າຫາກວ່າທ່ານບໍ່ສາມາດສະໜອງໃບສະໝັກດັ່ງກ່າວໄດ້, ທ່ານຍັງສາມາດຕິດຕໍ່ບຸກຄົນດັ່ງຕໍ່ໄປນີ້ເພື່ອຂໍຂໍ້ມູນເພີ່ມເຕີມ:

**ທ. ປະເສີດ ຄູນສົມເຮືອງ;**
ຜູ້ປະສານງານໂຄງການ ກຣີນ (GREEN), ອົງການ CCL
ໂທ: +856 20 95 530 140
ອີເມລ: sertk14@gmail.com

**ທ. ນູ ຢ່າງ;**
ຜູ້ຊ່ວຍວິຊາການດ້ານສິ່ງແວດລ້ອມ ໂຄງການ ກຣີນ (GREEN)
ໂທ: +856 20 91 443 662
ອີເມລ: nouyang-n@outlook.com

ທ່ານຈະມີໂອກາດເຂົ້າຮ່ວມການສໍາພາດ ເພື່ອປຶກສາຫາລືກ່ຽວກັບປະສົບການ ແລະ ບົດບາດຂອງທ່ານ. ອົງການ CCL ຈະຮຽກຮ້ອງໃຫ້ທ່ານສະໜອງຜູ້ອ້າງອີງ 2-3 ຄົນເພື່ອຕິດຕໍ່. ມື້ສຸດທ້າຍຂອງການສະໝັກ ແມ່ນ: 30 ກັນຍາ 2025